HIỆP ĐỊNH
GIỮA
CHÍNH PHỦ NƯỚC CỘNG HOÀ XÃ HỘI CHỦ NGHĨA VIỆT NAM
VÀ
CHÍNH PHỦ NƯỚC CỘNG HOÀ DÂN CHỦ NHÂN DÂN LÀO
VỀ VIỆC CỬ VÀ TIẾP NHẬN CHUYÊN GIA VIỆT NAM ĐI LÀM VIỆC TẠI LÀO

Chính phủ nước Cộng hoà xã hội chủ nghĩa Việt Nam (sau đây gọi là phía Việt Nam) và Chính phủ nước Cộng hoà Dân chủ Nhân dân Lào (sau đây gọi là phía Lào);

Phù hợp với tình hình phát triển quan hệ hợp tác kinh tế, văn hoá và khoa học-kỹ thuật giữa hai nước và sự cần thiết tăng cường, phát huy hiệu quả của việc cử và tiếp nhận chuyên gia Việt Nam sang làm việc tại Lào;

Căn cứ Điều 3 của Hiệp định hợp tác kinh tế, văn hoá, khoa học- kỹ thuật giữa Chính phủ nước Cộng hoà xã hội chủ nghĩa Việt Nam và Chính phủ nước Cộng hoà dân chủ nhân dân Lào ký ngày 15 tháng 1 năm 2002;

Đã thoả thuận và cam kết thực hiện những điều khoản về việc cử và tiếp nhận chuyên gia Việt Nam đi làm việc tại Lào (sau đây gọi là chuyên gia) theo đường Chính phủ giữa hai nước như sau:

ĐIỀU 1

Theo đề nghị của phía Lào, phía Việt Nam đáp ứng tích cực việc cử chuyên gia đi làm việc tại Lào trong các lĩnh vực kinh tế, văn hoá, khoa học-kỹ thuật và các lĩnh vực khác.

ĐIỀU 2

Chính phủ nước Cộng hoà xã hội chủ nghĩa Việt Nam uỷ quyền cho Bộ Lao động - Thương binh và Xã hội Việt Nam và Chính phủ nước Cộng hoà dân chủ nhân dân Lào uỷ quyền cho Bộ Lao động và Phúc lợi Xã hội Lào (sau đây gọi là các Cơ quan được uỷ quyền) chịu trách nhiệm làm đầu mối quản lý, điều hành và theo dõi thực hiện việc cử, tiếp nhận chuyên gia theo Hiệp định

này. Cơ quan được uỷ quyền phía Việt Nam uỷ nhiệm cho Đại sứ quán Việt Nam tại Lào đảm nhiệm công tác quản lý chuyên gia Việt Nam tại Lào. Cơ quan được uỷ quyền phía Lào uỷ nhiệm cho Đại sứ quán Lào tại Việt Nam phối hợp với các Bộ, ngành, địa phương của Việt Nam đảm nhiệm công tác tuyển chọn chuyên gia Việt Nam sang làm việc tại Lào theo đề nghị của các cơ quan hữu quan của Lào.

Các Cơ quan được uỷ quyền của hai nước thành lập các nhóm chuyên viên theo dõi việc thực hiện Hiệp định để giải quyết những vấn đề nảy sinh trong quá trình thực hiện Hiệp định này.

ĐIỀU 3

3.1. Những quy định của Hiệp định này được áp dụng cho chuyên gia đi theo kế hoạch hợp tác của Chính phủ, là những người do các cơ quan nhà nước, các tổ chức kinh tế, khoa học kỹ thuật, công nghệ, giáo dục, văn hoá, xã hội của Việt Nam cử sang Lào làm việc theo yêu cầu của phía Lào.

Việc cử chuyên gia đi theo đường hợp tác giữa các doanh nghiệp và tổ chức kinh tế của hai nước thực hiện theo Hiệp định hợp tác lao động giữa Chính phủ Cộng hoà xã hội chủ nghĩa Việt Nam và Chính phủ Cộng hoà dân chủ nhân dân Lào ký ngày 29 tháng 6 năm 1995 và Nghị định thư sửa đổi, bổ sung Hiệp định Hợp tác lao động giữa Chính phủ Cộng hoà xã hội chủ nghĩa Việt Nam và Chính phủ Cộng hoà dân chủ nhân dân Lào ký ngày 08 tháng 4 năm 1999.

3.2. Việc cử, tiếp nhận, sử dụng và quản lý chuyên gia Việt Nam làm việc tại Lào được tiến hành trên cở sở Hợp đồng cử và tiếp nhận chuyên gia được ký kết giữa các Bộ, ngành, địa phương cấp tỉnh của hai nước phù hợp với pháp luật hiện hành của hai nước và những quy định của Hiệp định này.

3.3. Trong thời hạn 15 ngày sau khi ký kết Hợp đồng cử và tiếp nhận chuyên gia, các Bộ, ngành, địa phương của hai nước phải báo cáo cho các Cơ quan được uỷ quyền về nội dung và kế hoạch thực hiện hợp đồng.

3.4. Hợp đồng cử và tiếp nhận chuyên gia phải có nội dung phù hợp với những quy định của Hiệp định này và cần nêu cụ thể:

- Số lượng, ngành nghề, trình độ chuyên môn cũng như công việc và nhiệm vụ được giao của chuyên gia;

- Thời hạn hợp đồng và ngày bắt đầu làm việc, cơ quan và địa phương nơi chuyên gia làm việc;

- Tiền lương cơ bản tối thiểu và các loại phụ cấp liên quan của chuyên gia;

- Điều kiện ăn, ở và nghỉ ngơi tối thiểu của chuyên gia và gia đình;

- Các điều kiện về bảo hiểm xã hội, chăm sóc y tế, về chi phí đi lại tối thiểu của chuyên gia.

ĐIỀU 4

4.1. Trên cơ sở Hợp đồng cử và tiếp nhận chuyên gia do các Bộ, ngành, tỉnh của hai nước ký kết, cơ quan, tổ chức Lào trực tiếp nhận, sử dụng và trả lương chuyên gia thực hiện việc ký kết một Hợp đồng làm việc với cá nhân chuyên gia. Hợp đồng làm việc quy định những cam kết cụ thể của hai bên trên cơ sở Hợp đồng cử và tiếp nhận chuyên gia đã ký và là một bộ phận không tách rời của Hợp đồng này.

4.2. Chuyên gia được phân thành hai loại:

- Chuyên gia ngắn hạn khi thời gian làm việc ghi trong Hợp đồng cử và tiếp nhận chuyên gia dưới 6 tháng.

- Chuyên gia dài hạn khi thời gian làm việc ghi trong Hợp đồng cử và tiếp nhận chuyên gia từ 6 tháng trở lên.

4.3. Chuyên gia dài hạn được mang theo vợ (chồng) và con.

4.4. Thời hạn làm việc của chuyên gia có thể được rút ngắn hoặc kéo dài so với Hợp đồng làm việc đã ký. Việc rút ngắn hoặc kéo dài thời hạn làm việc được thực hiện sau khi có thoả thuận giữa các bên ký kết Hợp đồng cử và tiếp nhận chuyên gia.

Trong trường hợp thời gian làm việc của chuyên gia bị rút ngắn theo yêu cầu của phía Lào không do lỗi của chuyên gia, phía Lào thực hiện một khoản trợ cấp không ít hơn tiền lương của một nửa thời hạn rút ngắn so với thời gian ghi trong Hợp đồng cử và tiếp nhận chuyên gia và Hợp đồng làm việc.

4.5. Thời hạn làm việc của chuyên gia được tính kể từ ngày chuyên gia có mặt tại Lào cho đến ngày cuối cùng của Hợp đồng cử và tiếp nhận chuyên gia.

4.6 Thời hạn hợp đồng làm việc của chuyên gia trong lĩnh vực giáo dục và đào tạo được xác định trong Hợp đồng cử và tiếp nhận chuyên gia và Hợp đồng làm việc, phù hợp với yêu cầu và điều kiện cụ thể tại nơi làm việc.

ĐIỀU 5

5.1 Phía Lào thực hiện các thủ tục cư trú hợp pháp và chế độ bảo hiểm xã hội cho chuyên gia ngay khi có mặt tại Lào.

5.2 Phía Lào tổ chức và tiến hành các biện pháp an ninh cần thiết bảo đảm an toàn cho chuyên gia và gia đình trong thời gian chuyên gia làm việc tại Lào.

ĐIỀU 6

6.1 Thời gian làm việc của chuyên gia trong một tuần là 40 giờ, mỗi ngày 8 giờ. Chuyên gia giảng dạy có số giờ lên lớp được áp dụng theo quy định hiện hành của Nhà nước Lào.

6.2 Chuyên gia làm việc thêm giờ, làm việc trong ngày nghỉ chính thức và trong thời gian nghỉ phép do yêu cầu của phía Lào được phía Lào trả ít nhất gấp đôi lương cơ bản. Chuyên gia làm việc ca đêm được hưởng chế độ bồi dưỡng theo quy định chung của Nhà nước Lào.

6.3 Mỗi năm, chuyên gia được nghỉ phép 15 ngày làm việc hưởng nguyên lương. Chế độ nghỉ phép năm về Việt Nam chỉ áp dụng cho chuyên gia dài hạn có thời hạn làm việc liên tục theo hợp đồng từ 18 tháng trở lên.

6.4 Chuyên gia được nghỉ việc có trả lương trong những ngày sau đây:

- Ngày nghỉ hàng tuần theo chế độ lao động của Lào;

- Những ngày lễ chính thức của Lào;

- Ngày Quốc khánh 2/9 (nghỉ một ngày) và Tết cổ truyền dân tộc của Việt nam (nghỉ bốn ngày).

ĐIỀU 7

7.1 Mức lương cơ bản cụ thể được quy định trong Hợp đồng cử và tiếp nhận chuyên gia và không được thấp hơn mức lương tối thiểu quy định tại Phụ

lục kèm theo Hiệp định này. Mức lương tối thiểu được các Cơ quan được uỷ quyền thoả thuận điều chỉnh phù hợp với điều kiện thực tế ở Lào.

7.2 Ngoài tiền lương cơ bản, chuyên gia được hưởng các khoản phụ cấp và các chế độ bồi dưỡng theo quy định của Hợp đồng cử và tiếp nhận chuyên gia và chế độ hiện hành của Nhà nước Lào.

7.3 Phía Lào trả tiền lương cơ bản hàng tháng cho chuyên gia theo mức lương được quy định trong Hợp đồng cử và tiếp nhận chuyên gia và Hợp đồng làm việc. Tiền lương cơ bản của chuyên gia được trả trước ngày 30 hàng tháng được tính theo tỷ giá đồng đô-la Mỹ.

ĐIỀU 8

8.1 Phía Lào chịu chi phí vé máy bay và các phương tiện giao thông khác cũng như các chi phí lưu trú, đi đường, bao gồm:

- Lượt đi và về từ địa điểm chuyên gia yêu cầu từ Việt Nam tới nơi làm việc tại Lào, địa điểm cụ thể sẽ do chuyên gia thoả thuận với cơ quan tiếp nhận.

- Lượt về Việt Nam và trở lại Lào trong dịp nghỉ phép năm về Việt Nam cho chuyên gia dài hạn.

8.2 Phương tiện đi lại làm việc hàng ngày do chuyên gia thoả thuận cụ thể với cơ quan tiếp nhận.

Trong trường hợp chuyên gia đi công tác ngoài nơi làm việc thường xuyên thì chi phí phương tiện đi lại do cơ quan sử dụng và trả lương cho chuyên gia của Lào chịu.

ĐIỀU 9

Phía Lào đảm bảo cung cấp nhà ở có tiện nghi phù hợp cho chuyên gia và gia đình họ theo những điều kiện quy định trong Hợp đồng làm việc.

Chi phí cho việc thuê nhà ở và các dịch vụ công cộng khác theo điều kiện và mức giá hiện hành của Lào, do chuyên gia thoả thuận với cơ quan tiếp nhận.

ĐIỀU 10

10.1 Chuyên gia có trách nhiệm nộp bảo hiểm y tế và bảo hiểm tai nạn theo quy định của pháp luật Lào đối với công chức Lào và được hưởng chế độ khám sức khoẻ, chữa bệnh, bồi thường như công chức của Lào.

Trong thời gian điều trị, chuyên gia được nghỉ việc có trả lương trong phạm vi tổng số ngày nghỉ để điều trị không quá 30 ngày trong một năm.

10.2 Trong trường hợp chuyên gia nghỉ điều trị liên tục quá 30 ngày, nếu có thẩm định của Hội đồng y tế có thẩm quyền xác nhận không đủ sức khoẻ để tiếp tục làm việc, phía Lào có quyền chấm dứt Hợp đồng trước thời hạn, không phải bồi thường mất việc sau khi đã thống nhất với phía Việt Nam.

10.3 Trường hợp chuyên gia bị bệnh hiểm nghèo mà không có khả năng điều trị tại Lào, phía Lào cho phép họ về Việt Nam điều trị. Phía Lào chịu tiền vé máy bay và chi phí đi đường. Chi phí điều trị do phía Việt Nam chịu.

Nếu thời gian điều trị quá 30 ngày liên tục và có xác nhận của cơ quan y tế Việt Nam về việc chuyên gia không còn khả năng trở lại làm việc thì phía Lào sẽ thực hiện như khoản 10.2 nói trên.

Trường hợp chuyên gia điều trị tại Việt Nam trong thời gian không quá 30 ngày, chuyên gia được trở lại làm việc tại Lào với sự xác nhận khỏi bệnh của cơ quan y tế Việt Nam. Vé máy bay và chi phí đi đường trở lại Lào cho chuyên gia do phía Lào chịu.

10.4 Trường hợp chuyên gia có người thân là bố, mẹ, vợ, chồng, con ...bị chết ở Việt Nam, tuỳ theo điều kiện có thể, phía Lào tạo điều kiện thuận lợi cho chuyên gia được về Việt Nam nhanh nhất. Mọi chi phí giao thông khứ hồi áp dụng như chế độ về nước nghỉ phép. Trường hợp chuyên gia đã về nước nghỉ phép hoặc không có tiêu chuẩn, chuyên gia tự chịu mọi chi phí.

10.5 Trong trường hợp chuyên gia bị tai nạn hoặc bị chết trong lúc đang thực hiện nhiệm vụ và sinh sống tại Lào, phía Lào làm mọi việc cần thiết và chịu mọi chi phí cho tang lễ và vận chuyển thi hài người chết về Việt Nam.

ĐIỀU 11

Chuyên gia làm việc tại Lào có trách nhiệm thực hiện các quy định sau đây:

11.1 Tuân thủ sự chỉ đạo của cơ quan hoặc tổ chức ký Hợp đồng làm việc của Lào, chấp hành các quy định hiện hành của Đại sứ quán Việt Nam tại Lào về quản lý chuyên gia Việt Nam tại Lào và thực hiện đúng các điều khoản trong các hợp đồng đã ký.

11.2 Giữ đúng nội quy và kỷ luật lao động. Làm tròn trách nhiệm về chuyên môn đối với cơ quan trực tiếp ký Hợp đồng làm việc của Lào.

11.3 Tôn trọng pháp luật của Nhà nước Lào, phong tục tập quán của nhân dân Lào, không được vi phạm và làm ảnh hưởng xấu đến mối quan hệ và tình hữu nghị đặc biệt giữa Chính phủ và nhân dân hai nước.

11.4 Trường hợp chuyên gia không hoàn thành nhiệm vụ, vi phạm nghiêm trọng pháp luật của Nhà nước Lào và quan hệ xã hội của nhân dân Lào, phía Lào có quyền yêu cầu đình chỉ hợp đồng trước thời hạn, không phải bồi thường. Thủ tục đình chỉ hợp đồng và xử lý được thực hiện có sự thống nhất giữa hai phía và phù hợp với pháp luật của Lào.

11.5 Trong thời gian làm việc tại Lào, 3 tháng một lần và khi kết thúc Hợp đồng làm việc, chuyên gia phải báo cáo công tác gửi Cơ quan ký kết Hợp đồng cử và tiếp nhận chuyên gia.

ĐIỀU 12

Chuyên gia được phía Việt Nam cử đi làm việc tại Lào nếu không biết tiếng Lào, phải biết một ngoại ngữ thông dụng theo yêu cầu của phía Lào. Trong trường hợp cần thiết, phía Lào có thể bố trí phiên dịch.

ĐIỀU 13

13.1 Trong thời gian công tác tại Lào, chuyên gia có quyền chuyển về Việt Nam những tài sản mà chuyên gia có được một cách hợp pháp phù hợp với quy định pháp luật của hai nước.

13.2 Trường hợp không chuyển về nước những tài sản mà chuyên gia có được một cách hợp pháp, chuyên gia có quyền chuyển nhượng tại chỗ theo qui định và chính sách của Chính phủ Lào

13.3 Chuyên gia được quyền chuyển đổi thu nhập do thực hiện nhiệm vụ của mình tại Lào sang ngoại tệ để chuyển về Việt Nam theo quy định pháp luật của hai nước.

ĐIỀU 14

14.1 Hiệp định này quy định những nguyên tắc cơ bản về việc cử và tiếp nhận chuyên gia Việt Nam đi làm việc tại Lào. Những vấn đề không nêu trong Hiệp định này có thể được quy định trong Hợp đồng cử và tiếp nhận chuyên gia và Hợp đồng làm việc.

14.2 Những vấn đề phát sinh cần giải quyết trong quá trình thực hiện các Hợp đồng cử và tiếp nhận chuyên gia và Hợp đồng làm việc phải được giải quyết thông qua thương lượng giữa hai bên ký kết. Nếu không giải quyết được sẽ đưa lên các Cơ quan được uỷ quyền.

14.3 Định kỳ hàng năm, các bộ, ngành, địa phương cấp tỉnh của hai nước có trách nhiệm báo cáo Cơ quan được uỷ quyền của nước mình về kết quả thực hiện Hợp đồng khung cử và tiếp nhận chuyên gia Việt Nam sang làm việc tại Lào.

ĐIỀU 15

15.1 Hiệp định này có thể được sửa đổi, bổ sung phù hợp với thực tế trên cơ sở sự chấp thuận bằng văn bản của hai phía. Những sửa đổi, bổ sung này là một bộ phận không tách rời của Hiệp định.

15.2 Hiệp định này thay thế cho Thoả thuận giữa Chính phủ nước Cộng hoà xã hội chủ nghĩa Việt Nam và Chính phủ nước Cộng hoà dân chủ nhân dân Lào về việc cử và tiếp nhận chuyên gia Việt Nam làm việc tại Lào ký ngày 07 tháng 4 năm 1994.

15.3 Hiệp định này có hiệu lực kể từ ngày ký và có giá trị trong thời gian hai (02) năm và được mặc nhiên gia hạn từng (01) năm một, trừ khi một trong hai phía thông báo bằng văn bản cho phía bên kia qua đường ngoại giao về ý

định chấm dứt hoặc điều chỉnh thời hạn của Hiệp định ít nhất sáu (06) tháng trước khi Hiệp định chấm dứt hiệu lực.

Làm và ký tại Luông-pra-băng ngày 24 tháng 3 năm 2009 thành hai bản chính, mỗi bản bằng tiếng Việt và tiếng Lào. Cả hai văn bản đều có giá trị như nhau./.

THAY MẶT CHÍNH PHỦ **NƯỚC CỘNG HOÀ XÃ HỘI** **CHỦ NGHĨA VIỆT NAM**	**THAY MẶT CHÍNH PHỦ** **NƯỚC CỘNG HOÀ DÂN CHỦ** **NHÂN DÂN LÀO**
NGUYỄN THỊ KIM NGÂN **Bộ trưởng** **Bộ Lao động-Thương binh và Xã hội**	**ON CHĂN THĂM MA VÔNG** **Bộ trưởng** **Bộ Lao động và Phúc lợi xã hội**

PHỤ LỤC

Kèm theo Hiệp định giữa Chính phủ nước Cộng hoà Xã hội chủ nghĩa Việt Nam và Chính phủ nước Cộng hoà Dân chủ Nhân dân Lào về việc cử và tiếp nhận chuyên gia Việt Nam đi làm việc tại Lào ký ngày 24 tháng 3 năm 2009

MỨC LƯƠNG TỐI THIỂU CỦA CHUYÊN GIA VIỆT NAM

Bậc lương	Trình độ nghiệp vụ	Mức lương (USD/tháng)
1	Chuyên viên cấp cao, cố vấn các cơ quan đầu ngành	1.800
2	Giáo sư, phó giáo sư, giảng dạy tại các trường đại học, cán bộ khoa học kỹ thuật cao cấp, bác sỹ chuyên khoa 1, chuyên khoa 2.	1.600
3	Kỹ sư, bác sỹ, giáo viên đại học	1.400
4	Y tá trưởng, cán bộ trung cấp chuyên nghiệp	1.100

ສັນຍາ

ລະຫວ່າງ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ

ແລະ

ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍການ ຮັບ - ສົ່ງ ຊ່ຽວຊານ ຫວຽດນາມ ມາເຮັດວຽກຢູ່ລາວ

ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕໍ່ໄປນີ້ ເອີ້ນຫຍໍ້ວ່າ "ຝ່າຍຫວຽດນາມ ແລະ ຝ່າຍລາວ"

ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວ ໃນການພົວພັນຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງ ສອງປະເທດ ແລະ ດ້ວຍຈຸດປະສົງ ເພື່ອເສີມຂະຫຍາຍປະສິດທິຜົນໃນການ ຮັບ - ສົ່ງ ຊ່ຽວຊານ ຫວຽດນາມ ມາເຮັດວຽກຢູ່ລາວ.

ອີງໃສ່ ມາດຕາ 3 ສັນຍາວ່າດ້ວຍການຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ເຊິ່ງໄດ້ລົງນາມ ຄັ້ງວັນທີ 15 ມັງກອນ 2002.

ໄດ້ຕົກລົງເອກະພາບກັນ ປະຕິບັດບັນດາຂໍ້ບັນຍັດ ກ່ຽວກັບການຮັບ - ສົ່ງ ຊ່ຽວຊານ ຫວຽດນາມ ມາເຮັດວຽກຢູ່ລາວ (ຕໍ່ໄປເອີ້ນຫຍໍ້ວ່າ: ຊ່ຽວຊານ) ຕາມແຜນການລັດຖະບານ ຂອງສອງປະເທດ ດັ່ງລຸ່ມນີ້:

ມາດຕາ 1:

ອີງຕາມ ການສະເໜີຂອງ ຝ່າຍລາວ, ຝ່າຍຫວຽດນາມ ຈະເອົາໃຈໃສ່ຕອບສະໜອງ ຈັດສົ່ງຊ່ຽວຊານມາເຮັດວຽກຢູ່ລາວ ໃນຂົງເຂດ ເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ແລະ ຂົງເຂດ ອື່ນໆ.

ມາດຕາ 2:

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມອບສິດ ໃຫ້ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ ລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ມອບສິດໃຫ້ ກະຊວງແຮງງານ, ເສຍອົງຄະ ແລະ ສັງຄົມ ຫວຽດນາມ (ຕໍ່ໄປ ເອີ້ນວ່າ ບັນດາອົງການ ຖືກມອບສິດ) ຮັບຜິດຊອບເປັນຂົວຕໍ່ ໃນການຄຸ້ມຄອງ, ບໍລິຫານ ແລະ ຕິດຕາມ ການປະຕິບັດ ການຮັບ - ສົ່ງ ຊ່ຽວຊານ ຕາມສັນຍາສະບັບນີ້. ອົງການຖືກມອບ ສິດ ຝ່າຍລາວ ມອບໃຫ້ສະຖານທູດລາວ ປະຈຳ ສສ ຫວຽດນາມ ເປັນຜູ້ຄັດເລືອກເອົາຊ່ຽວຊານ ຫວຽດນາມ ມາເຮັດວຽກຢູ່ລາວ ຕາມການສະເໜີ ຂອງຂະແໜງການກ່ຽວຂ້ອງ, ຝ່າຍຫວຽດ ນາມ ມອບສິດ ໃຫ້ສະຖານທູດຫວຽດນາມ ປະຈຳ ສປປ ລາວ ຮັບຜິດຊອບໃນການຄຸ້ມຄອງ ຊ່ຽວຊານ ຫວຽດນາມ ຢູ່ລາວ.

ບັນດາອົງການ ທີ່ໄດ້ຮັບການມອບສິດຂອງສອງປະເທດ ຈະໄດ້ແຕ່ງຕັ້ງບັນດາຈຸວິຊາ ການຮັບຜິດຊອບຕິດຕາມການປະຕິບັດສັນຍາເພື່ອແກ້ໄຂບັນຫາເກີດຂຶ້ນໃນໄລຍະການປະຕິບັດ ສັນຍາ ສະບັບນີ້.

ມາດຕາ 3:

3.1. ບັນດາຂໍ້ກຳນົດ ໃນສັນຍາສະບັບນີ້ ໃຊ້ສຳລັບ ຊ່ຽວຊານ ທີ່ໄປຕາມແຜນການ ຮ່ວມມື ຂອງລັດຖະບານ, ແມ່ນບຸກຄົນ ທີ່ບັນດາອົງການຂອງລັດ, ອົງການຈັດຕັ້ງເສດຖະກິດ, ວິທະຍາສາດ - ເຕັກນິກ, ເຕັກໂນໂລຊີ, ສຶກສາ, ວັດທະນະທຳ, ສັງຄົມຂອງຫວຽດນາມ ສົ່ງມາເຮັດວຽກຕາມການຮຽກຮ້ອງຂອງ ຝ່າຍລາວ.

ການສົ່ງຊ່ຽວຊານ ໄປຕາມແຜນການຮ່ວມມື ລະຫວ່າງ ບັນດາວິສາຫະກິດທຸລະກິດ ແລະ ອົງການຈັດຕັ້ງເສດຖະກິດຂອງສອງປະເທດ ແມ່ນໃຫ້ປະຕິບັດຕາມສັນຍາ ກ່ຽວກັບການ ຮ່ວມມືດ້ານແຮງງານ ລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ທີ່ລົງນາມຄັ້ງ ວັນທີ 29 ເດືອນ 6 ປີ 1995 ແລະ ອະນຸສັນຍາສະບັບປັບປຸງເພີ່ມເຕີມ ສັນຍາຮ່ວມມືດ້ານແຮງງານ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສສ. ຫວຽດນາມ ທີ່ລົງນາມ ຄັ້ງວັນທີ 08 ເດືອນ 04 ປີ 1999.

3.2. ການຮັບ - ສົ່ງ, ນຳໃຊ້ ແລະ ຄຸ້ມຄອງ ຊ່ຽວຊານ ຫວຽດນາມ ທີ່ເຮັດວຽກຢູ່ ລາວ ໃຫ້ປະຕິບັດບົນພື້ນຖານຂໍ້ຜູກພັນ ຮັບ - ສົ່ງ ຊ່ຽວຊານ ທີ່ໄດ້ເຊັນກັນ ລະຫວ່າງ ກະຊວງ, ຂະ

ແໜງການ, ທ້ອງຖິ່ນຂັ້ນແຂວງ ຂອງສອງປະເທດ ໂດຍສອດຄ່ອງກັບລະບຽບກົດໝາຍ ທີ່ນຳໃຊ້ໃນປະຈຸບັນ ຂອງ ສອງປະເທດ ແລະ ບັນດາຂໍ້ກຳນົດໃນສັນຍາສະບັບນີ້.

3.3. ໄລຍະ 15 ວັນ ພາຍຫລັງເຊັນຂໍ້ຜູກພັນ ຮັບ - ສົ່ງ ຊ່ຽວຊານ. ບັນດາກະຊວງ, ຂະແໜງການ, ທ້ອງຖິ່ນ, ຂອງສອງປະເທດ ຕ້ອງແຈ້ງໃຫ້ບັນດາອົງການທີ່ໄດ້ຮັບມອບສິດ ກ່ຽວກັບ ເນື້ອໃນ ແລະ ແຜນການປະຕິບັດຂໍ້ຜູກພັນ.

3.4. ຂໍ້ຜູກພັນ ຮັບ - ສົ່ງ ຊ່ຽວຊານ ຕ້ອງມີເນື້ອໃນສອດຄ່ອງກັບບັນດາຂໍ້ກຳນົດຂອງ ສັນຍາສະບັບນີ້ ແລະ ຕ້ອງແຈ້ງລະອຽດ:

• ຈຳນວນ, ຂະແໜງວຽກ, ລະດັບວິຊາສະເພາະ ກໍຄືໜ້າວຽກ ແລະ ໜ້າທີ່ ທີ່ຈະມອບໝາຍ ໃຫ້ຊ່ຽວຊານເຮັດ.

• ກຳນົດເວລາປະຕິບັດຂໍ້ຜູກພັນ ແລະ ມື້ເລີ່ມຕົ້ນເຮັດວຽກ, ອົງການ ແລະ ທ້ອງຖິ່ນ ບ່ອນຊ່ຽວຊານຈະເຮັດວຽກ.

• ເງິນເດືອນພື້ນຖານຕ່ຳສຸດ ແລະ ນະໂຍບາຍອື່ນໆ ຂອງຊ່ຽວຊານ.

• ເງື່ອນໄຂ ກິນຢູ່, ພັກເຊົາ ຂັ້ນພື້ນຖານຂອງ ຊ່ຽວຊານ ແລະ ຄອບຄົວ.

• ບັນດາເງື່ອນໄຂ ກ່ຽວກັບປະກັນສັງຄົມ, ການບໍລິການສາທາລະນະສຸກ, ການໃຊ້ຈ່າຍ ໄປ - ມາ ໃນລະດັບຕ່ຳສຸດຂອງຊ່ຽວຊານ.

ມາດຕາ 4:

4.1. ບົນພື້ນຖານຂໍ້ຜູກພັນ ຮັບ - ສົ່ງ ຊ່ຽວຊານ ໂດຍແມ່ນບັນດາກະຊວງ, ຂະແໜງການ, ບັນດາແຂວງ ຂອງສອງປະເທດ ໄດ້ເຊັນກັນ, ອົງການຈັດຕັ້ງຜູ້ຮັບໂດຍກົງ ຂອງລາວ, ນຳໃຊ້ ແລະ ຈ່າຍເງິນເດືອນໃຫ້ຊ່ຽວຊານ ແລະ ປະຕິບັດການເຊັນຂໍ້ຜູກພັນເຮັດວຽກກັບຜູ້ຊ່ຽວຊານ ສະບັບໜຶ່ງອີກ. ຂໍ້ຜູກພັນເຮັດວຽກ ຕ້ອງກຳນົດການຕົກລົງລະອຽດຂອງທັງສອງຝ່າຍ ບົນພື້ນຖານຂໍ້ຜູກພັນ ຮັບ -ສົ່ງ ຊ່ຽວຊານ ທີ່ໄດ້ເຊັນກັນ, ຊຶ່ງແມ່ນພາກສ່ວນໜຶ່ງ ບໍ່ອາດແຍກອອກ ຈາກຂໍ້ຜູກພັນ ສະບັບນີ້:

4.2. ຊ່ຽວຊານ ແບ່ງອອກເປັນ 02 ປະເພດ :

- ຊ່ຽວຊານ ໄລຍະສັ້ນ: ໄລຍະການເຮັດວຽກລະບຸໄວ້ ໃນຂໍ້ຜູກພັນ ຮັບ - ສົ່ງ ຊ່ຽວຊານ ແມ່ນກຳນົດແຕ່ 6 ເດືອນລົງມາ.

- ຊ່ຽວຊານໄລຍະຍາວ: ໄລຍະການເຮັດວຽກລະບຸໄວ້ ໃນຂໍ້ຜູກພັນ ຮັບ - ສົ່ງ ຊ່ຽວຊານ ແມ່ນກຳນົດແຕ່ 6 ເດືອນຂຶ້ນໄປ.

4.3. ຊ່ຽວຊານໄລຍະຍາວ ມີສິດເອົາເມຍ ຫຼື (ຜົວ) ແລະ ລູກ ມາຢູ່ນຳໄດ້.

4.4. ກຳນົດເວລາເຮັດວຽກ ຂອງຊ່ຽວຊານ ອາດຫຍໍ້ເຂົ້າ ຫຼື ແກ່ຍາວຈາກຂໍ້ຜູກພັນເຮັດວຽກທີ່ໄດ້ເຊັນກັນ. ການຫຍໍ້ເຂົ້າ ຫລື ແກ່ຍາວກຳນົດເວລາເຮັດວຽກ ແມ່ນໄດ້ຮັບການປະຕິບັດພາຍຫລັງ ມີການຕົກລົງເຫັນດີ ລະຫວ່າງສອງຝ່າຍ ທີ່ໄດ້ເຊັນຂໍ້ຜູກພັນການ ຮັບ - ສົ່ງ ຊ່ຽວຊານ.

ໃນກໍລະນີ ເວລາເຮັດວຽກຂອງຊ່ຽວຊານ ຖືກຫຍໍ້ເຂົ້າຕາມການຮຽກຮ້ອງ ຂອງຝ່າຍ ລາວ ບໍ່ແມ່ນຍ້ອນຄວາມຜິດພາດຂອງຊ່ຽວຊານ, ຝ່າຍລາວ ຕ້ອງປະຕິບັດຕອບແທນຄ່າເສຍຫາຍ ບໍ່ຕ່ຳກວ່າເຄິ່ງໜຶ່ງ ຂອງເງິນເດືອນໃນໄລຍະເວລາ ທີ່ໄດ້ຫຍໍ້ເຂົ້າ ທຽບໃສ່ກຳນົດເວລາ ທີ່ລະບຸໄວ້ໃນຂໍ້ຜູກພັນ ຮັບ - ສົ່ງ ຊ່ຽວຊານ ແລະ ຂໍ້ຜູກພັນເຮັດວຽກ.

4.5. ກຳນົດໄລຍະເວລາເຮັດວຽກຂອງຊ່ຽວຊານ ແມ່ນຄິດໄລ່ນັບແຕ່ມື້ຊ່ຽວຊານ ມີໜ້າຢູ່ລາວ ຈົນເຖິງມື້ສຸດທ້າຍ ຂອງຂໍ້ຜູກພັນການ ຮັບ - ສົ່ງ ຊ່ຽວຊານ.

4.6 ກຳນົດໄລຍະເວລາຂໍ້ຜູກພັນເຮັດວຽກຂອງຊ່ຽວຊານໃນຂົງເຂດສຶກສາ ແລະ ກໍ່ສ້າງ ໄດ້ກຳນົດໃນຂໍ້ຜູກພັນ ຮັບ-ສົ່ງ ຊ່ຽວຊານ ແລະ ຂໍ້ຜູກພັນເຮັດວຽກ, ສອດຄ່ອງກັບຄວາມຕ້ອງການ ແລະ ເງື່ອນໄຂຕົວຈິງຂອງສະຖານທີ່ເຮັດວຽກ.

ມາດຕາ 5:

5.1. ຝ່າຍລາວປະຕິບັດບັນດາລະບຽບການ ໃນການພັກອາໄສຖືກຕ້ອງ ແລະ ລະບອບປະກັນສັງຄົມໃຫ້ຊ່ຽວຊານ ນັບແຕ່ເວລາຊ່ຽວຊານມີໜ້າຢູ່ລາວ.

5.2. ຝ່າຍລາວ ຈັດຕັ້ງ ແລະ ດຳເນີນບັນດາມາດຕະການປ້ອງກັນຄວາມສະໜິບ ທີ່ເໝາະສົມ ເພື່ອຮັບປະກັນຄວາມປອດໄພໃຫ້ຊ່ຽວຊານ ແລະ ຄອບຄົວໃນເວລາທີ່ປະຕິບັດງານຢູ່ລາວ.

ມາດຕາ 6:

6.1. ກຳນົດເວລາເຮັດວຽກຂອງ ຊ່ຽວຊານ ອາທິດໜຶ່ງແມ່ນ 40 ຊົ່ວໂມງ, ແຕ່ລະມື້ເຮັດວຽກ 8 ຊົ່ວໂມງ. ຊ່ຽວຊານສິດສອນທີ່ມີຊົ່ວໂມງຂຶ້ນຫ້ອງ ແມ່ນນຳໃຊ້ຕາມຂໍ້ກຳນົດລວມ ຂອງ ສປປ ລາວ.

6.2. ຊ່ຽວຊານເຮັດວຽກລ່ວງເວລາ, ເຮັດວຽກໃນວັນພັກລັດຖະການ ແລະ ໃນເວລາພັກຕ່າງໆ ຕາມການຮ້ອງຂໍຂອງຝ່າຍລາວ, ຝ່າຍລາວ ຕ້ອງຈ່າຍເງິນຢ່າງນ້ອຍໜຶ່ງເທົ່າຂອງເງິນເດືອນພື້ນຖານ. ຊ່ຽວຊານ ທີ່ເຮັດວຽກລ່ວງເວລາໃນຕອນກາງຄືນ ຕ້ອງໄດ້ຮັບເງິນບຳລຸງຕາມຂໍ້ກຳນົດລວມ ຂອງລັດຖະບານລາວ.

6.3. ແຕ່ລະປີ ຊ່ຽວຊານ ໄດ້ຮັບອະນຸຍາດພັກ 15 ວັນລັດຖະການໂດຍໄດ້ຮັບເງິນເດືອນຕາມປົກກະຕິ. ລະບອບໃນເຮັດວຽກລາພັກປະຈຳປີຢູ່ຫວຽດນາມແມ່ນປະຕິບັດພຽງແຕ່ຊ່ຽວຊານໄລຍະຍາວ, ຕໍ່ເນື່ອງຕາມຂໍ້ຜູກພັນແຕ່ 18 ເດືອນຂຶ້ນໄປ.

6.4. ວັນພັກຂອງຊ່ຽວຊານ ແຕ່ຕ້ອງຈ່າຍເງິນເດືອນ ມີດັ່ງລຸ່ມນີ້:

- ວັນພັກແຕ່ລະອາທິດ ຕາມລະບຽບແຮງງານ ຂອງລາວ.
- ບັນດາວັນພັກບຸນທາງການ ຂອງລາວ.
- ວັນຊາດ 2/9 (ພັກ ໜຶ່ງວັນ) ແລະ ວັນບຸນປີໃໝ່ປະຈຳຊາດ ຫວຽດນາມ (ພັກ ສີ່ວັນ).

ມາດຕາ 7:

7.1. ລະດັບເງິນເດືອນພື້ນຖານຕົວຈິງ ແມ່ນໄດ້ກຳນົດໃນຂໍ້ຜູກພັນ ຮັບ-ສົ່ງ ຊ່ຽວຊານ ແລະ ບໍ່ໃຫ້ຕ່ຳກ່ວາລະດັບເງິນເດືອນພື້ນຖານຕ່ຳສຸດທີ່ໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍສັນຍາສະບັບນີ້. ລະດັບເງິນເດືອນພື້ນຖານຈະມອບໃຫ້ບັນດາອົງການທີ່ຖືກມອບສິດຕົກລົງດັດແກ້ໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງ ຢູ່ ສປປ ລາວ.

7.2. ນອກຈາກເງິນເດືອນພື້ນຖານແລ້ວ ຊ່ຽວຊານ ຍັງຈະໄດ້ຮັບອຸດໜູນຕ່າງໆ ແລະ ບັນດາລະບອບບຳລຸງຕາມຂໍ້ຜູກພັນ ຮັບ-ສົ່ງ ຊ່ຽວຊານ ແລະ ຕາມລະບຽບການຂອງ ລາວ.

7.3. ຝ່າຍລາວຈະຈ່າຍເງິນເດືອນພື້ນຖານໃນແຕ່ລະເດືອນໃຫ້ຊ່ຽວຊານຕາມລະດັບເງິນເດືອນ ທີ່ໄດ້ກຳນົດໄວ້ໃນຂໍ້ຜູກພັນ ຮັບ-ສົ່ງ ຊ່ຽວຊານ ແລະ ຂໍ້ຜູ້ພັນເຮັດວຽກ. ເງິນເດືອນພື້ນຖານຂອງຊ່ຽວຊານ ຈະຖືກຈ່າຍກ່ອນວັນທີ 30 ຂອງແຕ່ລະເດືອນ ໂດຍເອົາເງິນໂດລາສະຫະລັດເປັນຫົວໜ່ວຍຄິດໄລ.

ມາດຕາ 8 :

8.1. ຝ່າຍລາວ ຮັບຜິດຊອບຄ່າປີ້ຍົນ ແລະ ພາຫະນະຮັບໃຊ້ອື່ນໆ ກໍຄືບັນດາການໃຊ້ຈ່າຍສິ້ນເປືອງ ພັກອາໄສ ໃນເວລາເດີນທາງ, ປະກອບດ້ວຍ:

- ຂາໄປ ແລະ ກັບ ແຕ່ສະຖານທີ່ຢູ່ ຫວຽດນາມ ເຖິງບ່ອນເຮັດວຽກຢູ່ລາວ, ລາຍລະອຽດໂດຍຊ່ຽວຊານ ຈະຕົກລົງກັບອົງການທີ່ຮັບເອົາ ຊ່ຽວຊານ.
- ຂາໄປ - ກັບ ແຕ່ລາວ - ຫວຽດນາມ - ລາວ ໃນໂອກາດລາພັກປະຈຳປີໄປຫວຽດນາມ ຂອງຊ່ຽວຊານ ໄລຍະຍາວ.

8.2. ພາຫະນະ ໄປ - ມາ ເຮັດວຽກແຕ່ລະມື້ຂອງ ຊ່ຽວຊານ ໂດຍການຕົກລົງລາຍລະ

ອງດກັບອົງການທີ່ຮັບເອົາຊ່ຽວຊານ.

ໃນກໍລະນີຊ່ຽວຊານ ໄປເຮັດວຽກທາງການນອກສະຖານທີ່ເຮັດວຽກ ຄ່າໃຊ້ຈ່າຍພາຫະນະ ໄປ-ມາ ແມ່ນອົງການນຳໃຊ້ ແລະ ຈ່າຍເງິນເດືອນໃຫ້ຊ່ຽວຊານ ເປັນຜູ້ຮັບຜິດຊອບ.

ມາດຕາ 9:

ຝ່າຍລາວຕ້ອງຮັບປະກັນຕອບສະໜອງເຮືອນຢູ່ ມີເຄື່ອງຮັບໃຊ້ທີ່ເໝາະສົມ ໃຫ້ແກ່ຊ່ຽວຊານ ແລະ ຄອບຄົວຂອງເຂົາເຈົ້າ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນຂໍ້ຜູກພັນ ທີ່ໄດ້ເຊັນກັນ.

ການຈ່າຍຄ່າເຊົ່າເຮືອນຢູ່ ແລະ ການບໍລິການສາທາລະນະອື່ນໆ, ແມ່ນຕາມເງື່ອນໄຂ ແລະ ລະດັບລາຄາໃນປະຈຸບັນຂອງລາວ ໂດຍຊ່ຽວຊານ ຈະເປັນຜູ້ຕົກລົງກັບອົງການຮັບເອົາຊ່ຽວຊານ.

ມາດຕາ 10:

10.1. ຊ່ຽວຊານ ມີໜ້າທີ່ຈ່າຍຄ່າປະກັນສຸຂະພາບ ແລະ ປະກັນອຸປະຕິເຫດ ຕາມລະບຽບການ ແລະ ກົດໝາຍຂອງລາວ ຄືກັບລັດຖະກອນລາວ ແລະ ໄດ້ຮັບລະບອບການດູແລສຸຂະພາບ, ການປິ່ນປົວພະຍາດ, ຄືກັນກັບລັດຖະກອນ ຂອງລາວ.

ໃນໄລຍະຊ່ຽວຊານເຈັບເປັນ ມີສິດລາພັກວຽກ ເພື່ອປິ່ນປົວ ແລະ ເງິນເດືອນຍັງໄດ້ຮັບປົກກະຕິໃນຂອບເຂດບໍ່ເກີນ 30 ວັນ/ປີ.

10.2. ກໍລະນີຊ່ຽວຊານພັກວຽກລຸນຕິດເກີນ 30 ວັນ, ຖ້າມີການສັນລະສູດຢັ້ງຢືນຈາກສະພາການແພດເປັນລາຍລັກອັກສອນວ່າ: ຜູ້ກ່ຽວມີສຸຂະພາບບໍ່ດີ, ບໍ່ສາມາດດຳເນີນວຽກງານຕໍ່ໄປໄດ້ ຝ່າຍລາວ ມີສິດຢຸດເຊົາຂໍ້ຜູກພັນກ່ອນກຳນົດເວລາ ໂດຍບໍ່ໄດ້ທົດແທນຄືນຄ່າເສຍຫາຍໃດໆ, ຫລັງຈາກ ໄດ້ເອກະພາບກັບຝ່າຍ ຫວຽດນາມ.

10.3. ກໍລະນີຊ່ຽວຊານເປັນພະຍາດທີ່ຮ້າຍແຮງ ບໍ່ມີຄວາມສາມາດປິ່ນປົວຢູ່ລາວ, ຝ່າຍລາວ ອະນຸຍາດໃຫ້ເຂົາເຈົ້າ ກັບຄືນຫວຽດນາມ ເພື່ອປິ່ນປົວ ໂດຍຝ່າຍລາວຮັບພາລະປີ້ຍົນ ແລະ ຄ່າໃຊ້ຈ່າຍການເດີນທາງ. ສ່ວນຄ່າປິ່ນປົວ ແມ່ນເປັນພາລະຂອງຝ່າຍ ຫວຽດນາມ ແລະ ຂອງຊ່ຽວຊານເອງ.

ກໍລະນີປິ່ນປົວຢູ່ ຫວຽດນາມ ໃນໄລຍະເກີນ 30 ວັນ ຕໍ່ເນື່ອງ ແລະ ໂດຍໄດ້ຮັບການຢັ້ງຢືນສຸຂະພາບເປັນລາຍລັກອັກສອນ ຂອງອົງການສາທາລະນະສຸກ ຫວຽດນາມ ຖ້າຊ່ຽວຊານ ບໍ່ສາມາດກັບມາເຮັດວຽກໄດ້, ຝ່າຍລາວຈະປະຕິບັດຕາມ ຂໍ້ 10.2 ໃນມາດຕານີ້.

ໃນກໍລະນີຊ່ຽວຊານປິ່ນປົວຢູ່ ຫວຽດນາມ ໃນລະຍະເວລາບໍ່ເກີນ 30 ວັນ, ຊ່ຽວຊານຈະໄດ້ກັບມາເຮັດວຽກຢູ່ລາວຄືນ ໂດຍມີການຢັ້ງຢືນການແພດຂອງ ຫວຽດນາມ. ຄ່າປີ້ຍົນ ແລະ ຄ່າໃຊ້ຈ່າຍການເດີນທາງກັບຄືນແມ່ນພາລະຂອງຝ່າຍ ລາວ.

10.4. ກໍລະນີຊ່ຽວຊານ ມີຍາດພີ່ນ້ອງໃກ້ຊິດຢູ່ ຫວຽດນາມ ຖືກເສຍຊີວິດ (ພໍ່, ແມ່, ເມຍ ແລະ ລູກ) ອີງຕາມເງື່ອນໄຂຕົວຈິງ, ຝ່າຍລາວອາດຈະອຳນວຍຄວາມສະດວກໃຫ້ເຂົາເຈົ້າກັບຫວຽດນາມ ໃນເວລາອັນໄວ. ທຸກການໃຊ້ຈ່າຍໃນການເດີນທາງ ໄປ ແລະ ກັບ ໃຫ້ນຳໃຊ້ຄືລະບອບລາພັກປະຈຳປີ ກໍລະນີຊ່ຽວຊານໄດ້ລາພັກກັບຄືນປະເທດ ຫຼື ບໍ່ມີອັດຕາ ຈະເປັນພາລະຂອງ ຊ່ຽວຊານ ໃນທຸກການໃຊ້ຈ່າຍ.

10.5. ໃນກໍລະນີຊ່ຽວຊານຖືກອຸປະຕິເຫດ ຫຼື ເສຍຊີວິດໃນເວລາກຳລັງປະຕິບັດໜ້າທີ່ ແລະ ດຳລົງຊີວິດຢູ່ລາວ, ຝ່າຍລາວຊ່ວຍເຮັດທຸກວຽກທີ່ຈຳເປັນ ແລະ ຮັບປະກັນການໃຊ້ຈ່າຍ ສິ່ງສະການ ຫຼື ເອົາສົບຂອງຜູ້ເສຍຊີວິດ ກັບຄືນຫວຽດນາມ.

ມາດຕາ 11:

ຊ່ຽວຊານ ຫວຽດນາມ ປະຈຳການຢູ່ລາວ ມີໜ້າທີ່ປະຕິບັດບັນດາຂໍ້ກຳນົດ ດັ່ງນີ້:

11.1. ປະຕິບັດຕາມການຊີ້ນຳ ນຳພາຂອງສຳນັກງານ ຫຼື ອົງການທີ່ເຊັນຂໍ້ຜູກພັນ ຂອງ ລາວ, ບັນດາຂໍ້ກຳນົດ ຂອງສະຖານທູດ ຫວຽດນາມ ປະຈຳ ສປປ ລາວ, ປະຕິບັດບັນດາຂໍ້ຕົກລົງ ທີ່ໄດ້ເຊັນກັນໃນຂໍ້ຜູກພັນຢ່າງເຂັ້ມງວດ.

11.2. ປະຕິບັດຢ່າງເຂັ້ມງວດ ລະບຽບວິໄນການອອກແຮງງານ, ເຮັດໃຫ້ລັອນໜ້າທີ່ວິຊາສະເພາະ ຕໍ່ອົງການທີ່ເຊັນຂໍ້ຜູກພັນເຮັດວຽກຂອງ ລາວ.

11.3. ເຄົາລົບ ແລະ ນັບຖືກົດໝາຍ ຮີດຄອງປະເພນີຂອງຊາດລາວ, ບໍ່ລະເມີດ ແລະ ສິ່ງ ຜົນສະທ້ອນອັນບໍ່ດີ ໃຫ້ແກ່ສາຍພົວພັນມິດຕະພາບແບບພິເສດ ລະຫວ່າງ ລັດຖະບານ ແລະ ປະຊາຊົນ ສອງປະເທດ.

11.4. ໃນກໍລະນີຊ່ຽວຊານ ເຮັດວຽກບໍ່ລັອນໜ້າທີ່, ລະເມີດຢ່າງໜັກໜ່ວງ ຕໍ່ລະບຽບ ກົດໝາຍຂອງລາວ ແລະ ມີການພົວພັນສົງຄົມ ຂອງປະຊາຊົນລາວ ຝ່າຍລາວມີສິດຢຸດເຊົາ ຂໍ້ຜູກພັນກ່ອນກຳນົດເວລາ. ໂດຍບໍ່ມີການຫົດແທນຄ່າເສຍຫາຍໃດໆ, ລະບຽບການຢຸດເຊົາ ຂໍ້ຜູກພັນເຮັດວຽກ ຕ້ອງປະຕິບັດຕາມຂໍ້ຕົກລົງ ຂອງສອງຝ່າຍ ໂດຍສອດຄ່ອງກັບລະບຽບກົດ ໝາຍຂອງລາວ.

11.5. ໃນໄລຍະເວລາປະຕິບັດໜ້າທີ່ວຽກງານຢູ່ລາວ, ຊ່ຽວຊານ ຕ້ອງເຮັດບົດລາຍງານ ປົກກະຕິ ເປັນແຕ່ລະ 03 ເດືອນ ແລະ ພາຍຫລັງປະຕິບັດໜ້າທີ່ສຳເລັດຕາມຂໍ້ຜູກພັນເຮັດວຽກ ຕ້ອງເຮັດບົດລາຍງານ ເຖິງອົງການເຊັນຂໍ້ຜູກພັນການ ຮັບ - ສິ່ງ ຊ່ຽວຊານຂອງ ລາວ.

ມາດຕາ 12:

ຊ່ຽວຊານ ຫວຽດນາມ ທີ່ມາປະຕິບັດວຽກງານຢູ່ລາວ, ຖ້າບໍ່ຮູ້ພາສາລາວ, ຕ້ອງຮູ້ພາສາ ຕ່າງປະເທດໃດໜຶ່ງ ທີ່ໃຊ້ກັນທົ່ວໄປ ຕາມຄວາມຮຽກຮ້ອງຂອງຝ່າຍລາວ. ໃນກໍລະນີທີ່ຈຳເປັນ ຝ່າຍລາວອາດຈະໃຊ້ພາສາແປ.

ມາດຕາ 13:

13.1. ຊ່ຽວຊານ ສາມາດໃຊ້ແຫລ່ງລາຍຮັບຂອງຕົນເອງ ເພື່ອຊື້ສິນຄ້ານຳເຂົ້າ ທີ່ມີມູນ ຄ່າສູງຢູ່ ສປປ ລາວ ເພື່ອຮັບໃຊ້ ແລະ ມີສິດເອົາເຄື່ອງດັ່ງກ່າວ ກັບຄືນເມື່ອປະເທດໄດ້ຕາມລະ ບຽບການ ແລະ ກົດໝາຍ ຂອງ ສອງປະເທດ.

13.2. ໃນກໍລະນີຊ່ຽວຊານ ບໍ່ເອົາສິນຄ້າກັບຄືນປະເທດ; ຕໍ່ສິນຄ້າທີ່ມີລາຄາສູງດັ່ງກ່າວ ກໍມີສິດຂາຍອອກຢູ່ກັບທີ່ຂອງລາວ ຕາມລະບຽບຫລັກການ ແລະ ນະໂຍບາຍຂອງລັດຖະບານ ລາວ.

13.3. ຊ່ຽວຊານມີສິດເອົາເງິນກີບ ທີ່ໄດ້ມາຈາກການປະຕິບັດໜ້າທີ່ວຽກງານ ຢູ່ ສປປ ລາວ ແລກປ່ຽນເອົາເງິນຕາຕ່າງປະເທດ ນຳທະນາຄານແຫ່ງລັດ ຂອງລາວ ເພື່ອເອົາກັບເມືອ ຫວຽດນາມ ຕາມກົດໝາຍ ຂອງສອງປະເທດ.

ມາດຕາ 14:

14.1. ສັນຍາສະບັບນີ້ ໄດ້ກຳນົດບັນດາຫລັກການພື້ນຖານ ກ່ຽວກັບການ ຮັບ - ສົ່ງ ຊ່ຽວຊານ ມາເຮັດວຽກຢູ່ລາວ. ສ່ວນບັນຫາທີ່ບໍ່ໄດ້ຍົກຂຶ້ນ ໃນສັນຍາສະບັບນີ້, ອາດຈະໄດ້ກຳນົດ ໃນຂໍ້ຜູກພັນເຮັດວຽກ.

14.2. ບັນດາບັນຫາທີ່ເກີດຂຶ້ນ ຈະຕ້ອງໄດ້ແກ້ໄຂ ໃນໄລຍະປະຕິບັດຂໍ້ຜູກພັນການ ຮັບ - ສົ່ງ ຊ່ຽວຊານ ແລະ ຂໍ້ຜູກພັນເຮັດວຽກ ຈະຕ້ອງໄດ້ແກ້ໄຂ ໂດຍການປຶກສາຫາລື ລະຫວ່າງ ສອງຝ່າຍທີ່ໄດ້ເຊັນກັນ. ຖ້າບໍ່ສາມາດແກ້ໄຂໄດ້, ຈະສະເໜີຕໍ່ອົງການທີ່ຖືກມອບໝາຍ ເພື່ອພິ ຈາລະນາແກ້ໄຂ.

14.3. ໃນແຕ່ລະໆ ວ, ແຕ່ລະປີ ບັນດາກະຊວງ, ຂະແໜງການທ້ອງຖິ່ນຂັ້ນແຂວງຂອງ ສອງປະເທດ ທີ່ມີໜ້າທີ່ລາຍງານ ໃຫ້ແກ່ອົງການທີ່ຖືກມອບສິດຂອງຕົນຊາບ ກ່ຽວກັບ ຜົນໄດ້ ຮັບຂອງການປະຕິບັດຂໍ້ຜູກພັນການ ຮັບ - ສົ່ງ ຊ່ຽວຊານ ຫວຽດນາມ ມາເຮັດວຽກຢູ່ ລາວ.

ເອກະສານຊ້ອນທ້າຍ
ຕາຕະລາງເງິນເດືອນພື້ນຖານຂອງຊ່ຽວຊານຫວຽດນາມ

ລ/ດ	ລະດັບຄວາມຮັບຜິດຊອບ	ລະດັບເງິນເດືອນ (USD) / ເດືອນ
1	ຊ່ຽວຊານຂັ້ນສູງ, ທີ່ໄປເຮັດວຽກໃນນາມ ທີ່ປຶກສາຂອງອົງການນຳ	1,800 USD
2	ສາດສະດາຈານ, ຮອງສາດສະດາຈານ ທີ່ສິດສອນຢູ່ໃນຍັນດາ ໂຮງຮຽນວິທະຍາໄລ, ພະນັກງານວິທະຍາສາດ - ເຕັກນິກຊັ້ນສູງ, ທ່ານໝໍວິຊາຊີບຂະແໜງ 1, ທ່ານໝໍ ວິຊາຊີບ ຂະແໜງ 2	1,600 USD
3	ວິສະວະກອນ, ທ່ານໝໍ, ອາຈານສອນໂຮງຮຽນວິທະຍາໄລ	1,400 USD
4	ຫົວໜ້າແພດ, ພະນັກງານຊັ້ນກາງລະດັບວິຊາການ	1,100 USD

ມາດຕາ 15:

15.1. ສັນຍາສະບັບນີ້ ອາດຈະປັບປຸງເພີ່ມເຕີມ ໃຫ້ສອດຄ່ອງກັບສະພາບຕົວຈິງ ດ້ວຍລາຍລັກອັກສອນ ຕາມຄວາມຮຽກຮ້ອງ ຂອງສອງຝ່າຍ.

15.2. ສັນຍາສະບັບນີ້ ປ່ຽນແທນຂໍ້ຕົກລົງລະຫວ່າງ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດ ນາມ ກ່ຽວກັບການ ຮັບ - ສົ່ງ ຊ່ຽວຊານ ຫວຽດນາມ ມາເຮັດວຽກຢູ່ ລາວ ສະບັບທີ່ໄດ້ລົງນາມ ຮ່ວມ ຄັ້ງວັນທີ 07 / 04 / 1994.

15.3. ສັນຍາສະບັບນີ້ ມີຄຸນຄ່າໃນຂອບເຂດ 02 ປີ ແລະ ມີຜົນສັກສິດນັບແຕ່ມື້ລົງ ນາມຮ່ວມກັນເປັນຕົ້ນໄປ; ຖ້າຫາກຝ່າຍໃດ ຝ່າຍໜຶ່ງ ທີ່ໄດ້ລົງນາມຮ່ວມກັນ ບໍ່ແຈ້ງໃຫ້ອີກຝ່າຍ ໜຶ່ງຮັບຮູ້ລ່ວງໜ້າກ່ອນ 06 ເດືອນ ໂດຍຊ່ອງທາງການທູດ ກ່ຽວກັບຈຸດປະສົງຢາກຢຸດເຊົາ ຫຼື ດັດແປງສັນຍາ ແມ່ນຈະໄດ້ຕໍ່ອາຍຸໄປຕື່ມອີກ ໃນແຕ່ລະປີໂດຍອັດຕະໂນມັດ.

ເຮັດທີ່ ແຂວງ ຫຼວງພະບາງ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວັນທີ 24 ມີນາ 2009

ເປັນສອງ ພາສາລາວ ແລະ ພາສາຫວຽດນາມ ທັງສອງພາສາລ້ວນແຕ່ມີຄຸນຄ່າເທົ່າ ທຽມກັນ.

ຕາງໜ້າ ລັດຖະບານ ແຫ່ງ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ	ຕາງໜ້າ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ທ່ານ ທີ ກິມ ເຈີນ ລັດຖະມົນຕີວ່າການ ກະຊວງແຮງງານ, ເສຍອົງຄະ ແລະ ສັງຄົມ	ອ່ອນຈັນ ທຳມະວົງ ລັດຖະມົນຕີວ່າການ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ